ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
Lao-China Securities Public Company

ບົດລາຍງານ ຜົນການດຳເນີນທຸລະກິດ ບລຈ

ປະຈຳ 6 ເດືອນຕົ້ນປີ 2026

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ຊື່ເກົ່າແມ່ນ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ເປັນບໍລິສັດຫຼັກຊັບແຫ່ງທຳອິດພາຍໃຕ້ການຮ່ວມມືລະຫວ່າງ ສປປ ລາວ ແລະ ສປ ຈີນ ທີ່ສ້າງຕັ້ງຂຶ້ນໃນວັນທີ 27 ມີຖຸນາ 2013 ໃນຮູບແບບ ບໍລິສັດຈຳກັດ ມີຊື່ວ່າ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ດ້ວຍທຶນຈົດທະບຽນ 100,000,000,000 ກີບ (ໜຶ່ງຮ້ອຍຕື້ກີບ), ຊຶ່ງມີຈຳນວນຮຸ້ນທັງໝົດ 10,000,000 ຮຸ້ນ, ມູນຄ່າກຳນົດ 10,000 ກີບ/ຮຸ້ນ ແລະ ໄດ້ເຄື່ອນໄຫວດຳເນີນທຸລະກິດດ້ານຫຼັກຊັບເຕັມຮູບແບບ ປະເພດ ❶ທີ່ປຶກສາທາງດ້ານການເງິນ, ❷ນາຍໜ້າຊື້ ຂາຍ ຫຼັກຊັບ ແລະ ❸ຜູ້ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ.

ບລຈ ໄດ້ຫັນປ່ຽນຮູບແບບ ບໍລິສັດຈຳກັດ ມາເປັນ ບໍລິສັດມະຫາຊົນ ໃນວັນທີ 25 ຕຸລາ 2024 ໂດຍທຶນຈົດທະບຽນ 100,000,000,000 ຕື້ກີບ, ຊຶ່ງມີຈຳນວນຮຸ້ນທັງໝົດ 1,000,000,000 ຮຸ້ນ, ມູນຄ່າກຳນົດ 100 ກີບ/ຮຸ້ນ ໂດຍມີ 3 ຜູ້ຖືຮຸ້ນ ຄື:

- ທະນາຄານສົ່ງເສີມກະສິກຳ ຈຳກັດ (ທສກ) ຖືຮຸ້ນ 410,000,000 ຮຸ້ນ ເທົ່າກັບ 41% ມີມູນຄ່າ 41 ຕື້ກີບ;
- ບໍລິສັດຫຼັກຊັບ ປາຊີຟິກ ຮຸ້ນສ່ວນ ຈຳກັດ (ປຊຟ) ຖືຮຸ້ນ 390,000,000 ຮຸ້ນ ເທົ່າກັບ 39% ມີມູນຄ່າ 39 ຕື້ ກີບ;
- ບໍລິສັດ ລາວ ອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ (ລອຂ) ຖືຮຸ້ນ 200,000,000 ຮຸ້ນ ເທົ່າກັບ 20% ມີມູນຄ່າ 20 ຕື້ກີບ.

ນັບແຕ່ດຳເນີນທຸລະກິດ ຈົນເຖິງປະຈຸບັນ ບລຈ ໄດ້ມີການຂະຫຍາຍຂອບເຂດການດຳເນີນທຸລະກິດດ້ານຫຼັກຊັບຈາກ 3 ປະເພດ ມາເປັນ 6 ປະເພດ ທີ່ໃຫ້ບໍລິການທຸລະກິດດ້ານຫຼັກຊັບຄົບວົງຈອນພຽງແຫ່ງດຽວໃນ ສປປ ລາວ ແລະ ມີສຳນັກງານຕັ້ງຢູ່: ເຂດເສດຖະກິດພິເສດ ບຶງທາດຫຼວງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ມີທ່າແຮງທີ່ຕັ້ງຂອງສຳນັກງານ ເພື່ອດຶງດູດບໍລິສັດ ແລະ ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ.

ບລຈ ສຳເລັດການອອກຈຳໜ່າຍຮຸ້ນຄັ້ງທຳອິດໃຫ້ແກ່ມວນຊົນ ແລະ ເຂົ້າຈົດທະບຽນຢ່າງເປັນທາງການ ທີ່ຕະຫຼາດຫຼັກຊັບລາວ (ຕລຊລ) ໃນວັນທີ 25 ເມສາ 2025, ຮຸ້ນທີ່ອອກຈຳໜ່າຍຈຳນວນ 111,111,200 ຮຸ້ນ, ໂດຍທຶນທີ່ລະດົມໄດ້ຈຳນວນ 14.44 ຕື້ກີບ. ໃນປະຈຸບັນ, ຈຳນວນຮຸ້ນທັງໝົດຂອງ ບລຈ ແມ່ນ 1,111,111,200 ຮຸ້ນ ແລະ ມີທຶນຈົດທະບຽນທັງໝົດ 111.11 ຕື້ກີບ, ປະກອບດ້ວຍຜູ້ຖືຮຸ້ນສ້າງຕັ້ງ 3 ຂາຮຸ້ນ ແລະ ຜູ້ລົງທຶນທົ່ວໄປ, ດັ່ງລາຍລະອຽດລຸ່ມນີ້:

- ທສກ ຖືຮຸ້ນ 410,000,000 ຮຸ້ນ ເທົ່າກັບ 36.90% ມີມູນຄ່າ 41 ຕື້ກີບ;
- ປຊຟ ຖືຮຸ້ນ 390,000,000 ຮຸ້ນ ເທົ່າກັບ 35.10% ມີມູນຄ່າ 39 ຕື້ກີບ;
- ລອຂ ຖືຮຸ້ນ 200,000,000 ຮຸ້ນ ເທົ່າກັບ 18% ມີມູນຄ່າ 20 ຕື້ກີບ.
- ຜູ້ລົງທຶນທົ່ວໄປ ຖືຮຸ້ນ 111,111,200 ຮຸ້ນ ເທົ່າກັບ 10% ມີມູນຄ່າ 11.11 ຕື້ກີບ.

ບລຈ ມີຜົນການດຳເນີນທຸລະກິດ ໃນໄລຍະ 6 ເດືອນຕົ້ນ ປີ 2026 ໂດຍມີບາງວຽກງານທີ່ພົ້ນເດັ່ນ ດັ່ງລຸ່ມນີ້:

1. **ການຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ**

ບລຈ ໄດ້ສຳເລັດການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2025 ໃນຊ່ວງເດືອນ ເມສາ 2026 ເພື່ອພິຈາລະນາຮອງຮັບແຜນການຈ່າຍເງິນປັນຜົນປະຈຳປີ 2025 (ຈ່າຍເງິນປັນຜົນດ້ວຍຮູບແບບ

ເງິນສົດ 14 ກີບ/ຮຸ້ນ ລວມມູນຄ່າທັງໝົດ 15.55 ຕື້ກີບ) ແລະ ໄດ້ສຳເລັດການຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ ໃນ ວັນທີ 15 ພຶດສະພາ 2026 ທີ່ຜ່ານມາ.

2. **ການປັບປຸງແຜນການນຳໃຊ້ເງິນທຶນທີ່ລະດົມໄດ້**

ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026 ໄດ້ມີມະຕິ ຮັບຮອງການປັບປຸງແຜນການ ນຳໃຊ້ທຶນທີ່ລະດົມໄດ້ ຜ່ານການອອກຈຳໜ່າຍ IPO ຂອງ ບລຈ ຈຳນວນ 10 ຕື້ກີບ ຫັນປ່ຽນຈາກການລົງທຶນ ສ້າງຕັ້ງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ມາເປັນການເພີ່ມກະແສເງິນສົດ ຂອງ ບລຈ, ພ້ອມທັງໄດ້ລາຍງານ ສຳ ແລະ ເປີດເຜີຍຂໍ້ມູນດັ່ງກ່າວຜ່ານ ຕລຊລ.

ບລຈ ຈະມີແຜນນຳໃຊ້ທຶນດັ່ງກ່າວ ເຂົ້າໃນການຮັບປະກັນຄ່າໃຊ້ຈ່າຍ Software and Hardware ຂອງການ ພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື (MTS) ເພື່ອໃຫ້ພະແນກນາຍໜ້າ ຊື້-ຂາຍ ຫຼັກຊັບ ສາມາດອຳນວຍຄວາມ ສະດວກແກ່ການຊື້-ຂາຍຫຼັກຊັບ ຂອງລູກຄ້າ, ດຶງດູດນັກລົງທຶນມາເປີດບັນຊີນຳ ບລຈ ພ້ອມທັງເພີ່ມລາຍຮັບນາຍ ໜ້າຊື້-ຂາຍຫຼັກຊັບ, ສ່ວນຈຳນວນເງິນທີ່ເຫຼືອ ຈະລົງທຶນໃສ່ເງິນຝາກນຳທະນາຄານທຸລະກິດ.

ກອງປະຊຸມຜູ້ຖືຮຸ້ນໃນຄັ້ງນີ້ ໄດ້ເຫັນດີມອບສິດໃຫ້ ບລຈ ຮ່າງແຜນງົບປະມານ Software and Hardware ຂອງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື, ເພື່ອສະເໜີຕໍ່ສະພາບໍລິຫານຮັບຮອງ. ໃນໄລຍະດັ່ງກ່າວ, ເພື່ອຍົກ ສູງປະສິດທິພາບແຫ່ງການນຳໃຊ້ທຶນຮອນ, ເຫັນດີນຳໃຊ້ທຶນທັງໝົດ 10 ຕື້ກີບ ດັ່ງກ່າວ ລົງທຶນໃສ່ເງິນຝາກນຳ ທະນາຄານທຸລະກິດ ຈົນກວ່າສະພາບໍລິຫານເຫັນດີຮັບຮອງ ແຜນງົບປະມານ Software and Hardware ຂອງ ການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື.

3. **ສະພາບການດຳເນີນທຸລະກິດປະຈຳ 6 ເດືອນຕົ້ນປີ 2026 (ຜ່ານການທົບທວນ)**

ມາຮອດວັນທີ 30 ມິຖຸນາ 2026, ບລຈ ມີຊັບສິນລວມ ຢູ່ທີ່ 243.96 ຕື້ກີບ, ຊັບສິນສຸດທິ ຢູ່ທີ່ 147.85 ຕື້ ກີບ. ລາຍຮັບຈາກການດຳເນີນງານຕົວຈິງໃນໄລຍະການລາຍງານ ຢູ່ທີ່ 20.27 ຕື້ກີບ ແລະ ມີກຳໄລສຸດທິ ຢູ່ທີ່ 13.94 ຕື້ກີບ, ຊຶ່ງມີຂໍ້ມູນການເງິນທີ່ສຳຄັນ ດັ່ງລຸ່ມນີ້:

ລາຍການ	6 ເດືອນຕົ້ນປີ 2025 (ກີບ) *ຜ່ານການທົບທວນ*	6 ເດືອນຕົ້ນປີ 2026 (ກີບ) *ຜ່ານການທົບທວນ*	ການປ່ຽນແປງ
ລາຍຮັບຈາກການດຳເນີນງານ	16,280,454,968	20,265,975,294	24.48%
ລາຍຈ່າຍຈາກການດຳເນີນງານ	381,225,025*	6,327,168,910	1,559.69%
ກຳໄລກ່ອນອາກອນ	15,899,299,943	13,938,806,384	-12.33%
ກຳໄລສຸດທິ	15,899,229,943	13,938,806,384	-12.33%
ລວມຊັບສິນ	237,556,384,797	243,957,549,664	2.69%
ລວມໜີ້ສິນ	72,654,704,485	96,111,701,768	32.29%
ລວມທຶນເຈົ້າຂອງ	164,901,680,312	147,845,847,896	-10.34%
ອັດຕາສ່ວນກຳໄລສຸດທິ	97.66%	68.78%	-28.88%
ອັດຕາຜົນຕອບແທນຈາກທຶນເຈົ້າ ຂອງ (ROE)	9.64%	9.43%	-0.21%

*ໝາຍເຫດ: ລາຍຈ່າຍຈາກການດຳເນີນງານ ໄລຍະ 6 ເດືອນຕົ້ນປີ 2026 ທີ່ເພີ່ມສູງຂຶ້ນຈາກປີທີ່ຜ່ານມາ ແມ່ນ ມາຈາກການຈ່າຍເງິນປັນຜົນ ປະຈຳປີ 2025, ເງິນອຸດໜູນ ແລະ ເງິນໂບນັດ ໃຫ້ແກ່ສະພາບໍລິຫານ ແລະ ພະນັກງານ ບລຈ ໃນວັນທີ 15 ພຶດສະພາ ປີ 2026, ຊຶ່ງໃນປີ 2025 ບລຈ ໄດ້ມີການຈ່າຍເງິນເງິນປັນຜົນ ປະຈຳປີ 2024, ເງິນ ອຸດໜູນ ແລະ ເງິນໂບນັດ ໃຫ້ແກ່ສະພາບໍລິຫານ ແລະ ພະນັກງານ ບລຈ ໃນວັນທີ 12 ກັນຍາ ປີ 2025.

4. ສະພາບການດຳເນີນທຸລະກິດຫຼັກຂອງ ບລຈ

1) ວຽກງານ ທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ

ວຽກງານ ທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ຂອງ ບລຈ ໄດ້ມີລາຍຮັບຈາກ ການດຳເນີນງານ ຈຳນວນ 3.83 ຕື້ກີບ. ໃນນັ້ນແມ່ນມາຈາກຄ່າບໍລິການ ການເປັນທີ່ປຶກສາດ້ານການເງິນຫຼັກ ແລະ ຕົວແທນການຈຳໜ່າຍພັນທະບັດລັດຖະບານ 4 ສະກຸນເງິນ.

ບັນດາໂຄງການທີ່ປຶກສາດ້ານການເງິນ ທີ່ຍັງສືບຕໍ່ກະກຽມໃນປີ 2026 ໄດ້ແກ່ ການອອກຈຳໜ່າຍຮຸ້ນ IPO ຂອງ ທະນາຄານ BIC, ບໍລິສັດ ຍອດງຶ່ມ ພາວເວີ ຈຳກັດ, ໂຄງການທີ່ປຶກສາດ້ານການເງິນຮ່ວມກັບ 2 ບໍລິສັດຫຼັກ ຊັບໃນການອອກຈຳໜ່າຍຮຸ້ນກູ້ສີຂຽວ ຂອງບໍລິສັດ LOCA ຈຳກັດ (ປະຈຸບັນ, ໄດ້ສຳເລັດການອອກຈຳໜ່າຍໃຫ້ ແກ່ຜູ້ລົງທຶນໃນວົງຈຳກັດ ມູນຄ່າ 850,000 ໂດລາສະຫະລັດ). ພ້ອມດຽວກັນນັ້ນ, ບລຈ ໃນນາມເປັນຕົວແທນ ການຈຳໜ່າຍພັນທະລັດຖະບານຫຼັກ ໄດ້ສະເໜີຂະຫຍາຍວົງເງິນຂອງການອອກຈຳໜ່າຍພັນທະບັດລັດຖະບານ ບ້ອງໃໝ່ ສະກຸນເງິນບາດ ຈຳນວນ 10 ຕື້ບາດ ແລະ ສະກຸນເງິນຢວນ ຈຳນວນ 1.5 ຕື້ຢວນ.

ນອກຈາກນັ້ນ, ບລຈ ຍັງໄດ້ເຂົ້າຮ່ວມກັບ 3 ບໍລິສັດຫຼັກຊັບ ເພື່ອເຂົ້າພົບບັນດາລັດວິສາຫະກິດເປົ້າໝາຍ ເພື່ອ ລົງເກັບກຳຂໍ້ມູນ ແລະ ສຶກສາຄວາມເປັນໄປໄດ້ໃນການກະກຽມຄວາມພ້ອມໃນການເຂົ້າມາລະດົມທຶນໃນຕະຫຼາດ ທຶນລາວ ຈາກກຸ່ມບໍລິສັດຫຼັກຊັບ ເປັນຕົ້ນແມ່ນ ບໍລິສັດ ປະກັນໄພແຫ່ງປະເທດລາວ ຈຳກັດຜູ້ດຽວ (AGL), ລັດວິ ສາຫະກິດ ໂຮງງານຜະລິດຢາເລກ 3 ແລະ ລັດວິສາຫະກິດ ກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ.

2) ວຽກງານ ຄ້າຫຼັກຊັບ

ໃນໄລຍະ 6 ເດືອນຕົ້ນປີ 2026 ວຽກງານຄ້າຫຼັກຊັບມີລາຍຮັບ ຢູ່ທີ່ 2.70 ຕື້ກີບ ຈາກເງິນປັນຜົນຂອງຮຸ້ນທີ່ ບລຈ ຖືຄອງຢູ່ຈາກການລົງທຶນໃນຫຼັກຊັບ. ປະຈຸບັນ, ບລຈ ຖືຄອງຮຸ້ນ 4 ບໍລິສັດຈົດທະບຽນ ມູນຄ່າທັງໝົດ 92.64 ຕື້ກີບ, ຊຶ່ງມີລາຍລະອຽດລຸ່ມນີ້:

ລ/ດ	ບໍລິສັດຈົດທະບຽນ	ມູນຄ່າ (ກີບ)
1	BCEL	30,579,250,000
2	EDL-GEN	336,665,610
3	LCTC	8,227,102,000
4	VCL	53,541,018,000
ມູນຄ່າທັງໝົດ		**92,684,035,610**

3) ວຽກງານ ນາຍໜ້າຊື້ ຂາຍຫຼັກຊັບ

ວຽກງານ ນາຍໜ້າຊື້ ຂາຍຫຼັກຊັບ ຂອງ ບລຈ ໄດ້ມີລາຍຮັບຕົວຈິງ 9.59 ຕື້ກີບ. ໃນນັ້ນ, ລາຍຮັບຄ່າທຳນຽມ ນາຍໜ້າຊື້ ຂາຍຫຼັກຊັບ 783.16 ລ້ານກີບ ແລະ ລາຍຮັບຄ່າທຳນຽມຕົວແທນຈຳໜ່າຍພັນທະບັດລັດຖະບານ 9.59

ຕື້ກີບ. ໃນນັ້ນ, ຍອດຈຳໜ່າຍພັນທະບັດລັດຖະບານຂອງ ບລຈ ປະກອບດ້ວຍ 4 ສະກຸນເງິນ ໄດ້ແກ່ 1,270.70 ຕື້ກີບ, 32.86 ລ້ານໂດລາສະຫະລັດ, 6.70 ຕື້ບາດ ແລະ 959.49 ລ້ານຢວນ.

4) **ວຽກງານ ເຕັກນິກຂໍ້ມູນຂ່າວສານ**

ບລຈ ສືບຕໍ່ ຮ່ວມມືກັບ ບໍລິສັດ HITHINK ໃນການດຳເນີນການພັດທະນາ ແລະ ທົດສອບລະບົບຊື້ ຂາຍ ຫຼັກຊັບຜ່ານໂທລະສັບມືຖືໃຫ້ສຳເລັດໂດຍໄວ ເພື່ອໃຫ້ໄດ້ນຳໃຊ້ງານໂດຍໄວ ເພື່ອຍົກສູງການບໍລິການລູກຄ້າໃຫ້ດີຍິ່ງຂຶ້ນ.

ຜູ້ອຳນວຍການ

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທອງ ເວີ